

## ພະນັກງານເຮັດວຽກຄະດີ ຂອງທ່ານມີ ບົດບາດຫຍັງ?

ພະນັກງານດູແລກໍລະນີຂອງທ່ານ ຈະແຈ້ງໃຫ້ທ່ານຊາບເຖິງເຫດຜົນທີ່ລູກຂອງທ່ານໄດ້ເຂົ້າສູ່ຂະບວນການຮ້ອງຂໍການເພິ່ງພາອາໄສ.. ພວກເຂົາຈະເປັນຄູ່ຮ່ວມກັບທ່ານເພື່ອປະເມີນຄວາມຕ້ອງການຂອງທ່ານ ແລະ ຊ່ວຍທ່ານໃນການບໍລິການເພື່ອສຸມໃສ່ການຫຼຸດຜ່ອນ ຫຼື ການກຳຈັດໄພຂົ່ມຂູ່ຕໍ່ຄວາມປອດໄພ ແລະ ຄວາມສ່ຽງ.

## ຄຳຮ້ອງຂໍການເພິ່ງພາອາໄສແມ່ນຫຍັງ?

ຄຳຮ້ອງຂໍການເພິ່ງພາອາໄສ ແມ່ນເອກະສານທາງດ້ານກົດໝາຍທີ່ໄດ້ສົ່ງຫາສານກ່ຽວກັບຄວາມກັງວົນທີ່ລູກຂອງທ່ານໄດ້ຖືກລ່ວງລະເມີດ, ຖືກລະເລີຍ ຫຼື ຖືກປະປ່ອຍ ຫຼື ບໍ່ມີພໍ່ແມ່ທີ່ຈະສາມາດໃຫ້ການເບິ່ງແຍງດູແລລູກຂອງທ່ານໄດ້ຢ່າງປອດໄພ. ຄຳຮ້ອງຂໍການເພິ່ງພາອາໄສ ຈະຂໍຮ້ອງໃຫ້ສານເຂົ້າມາ ແລະ ປົກປ້ອງລູກຂອງທ່ານຈາກອັນຕະລາຍ ແລະ ໃຫ້ລັດເຮັດໜ້າທີ່ຄຸ້ມຄອງທາງກົດໝາຍຊົ່ວຄາວຕໍ່ລູກຂອງທ່ານ. ການຈັດວາງລູກຂອງທ່ານ ແມ່ນສາມາດຢູ່ນອກເຮືອນ ຫຼື ຢູ່ໃນເຮືອນໄດ້ ໂດຍມີການບໍລິການເພື່ອຊ່ວຍທ່ານໃນການຮັກສາລູກຂອງທ່ານໃຫ້ມີຄວາມປອດໄພ.

## ທະນາຍຄວາມ

ທ່ານມີສິດມີທະນາຍຄວາມຕາງໜ້າໄດ້. ຖ້າທ່ານບໍ່ສາມາດຈ້າງທະນາຍຄວາມຂອງຕົນເອງໄດ້ຍ້ອນລາຍຮັບຂອງທ່ານ, ສານຈະແຕ່ງຕັ້ງທະນາຍຄວາມຄົນໜຶ່ງໃຫ້ທ່ານ.

## GAL/GAL ອາສາສະໝັກ

ບັນດາຜູ້ປົກຄອງອາສາສະໝັກ ຫຼື ທີ່ເອີ້ນວ່າ GAL Guardians ad Litem (ຜູ້ປົກຄອງສະເພາະຄະດີ) ອາສາສະໝັກ ຫຼື ບັນດາ GAL Guardians ad Litem (ຜູ້ປົກຄອງສະເພາະຄະດີ) ຖືກແຕ່ງຕັ້ງໂດຍຜູ້ພິພາກສາເພື່ອສະໜັບສະໜູນລູກຂອງທ່ານ. GAL ອາສາສະໝັກ ຫຼື GAL ລາຍງານໃຫ້ຜູ້ພິພາກສາຢູ່ໃນການໄຕ່ສວນຂອງສານໃນສິ່ງທີ່ພວກເຂົາເຊື່ອວ່າເປັນຜົນປະໂຫຍດດີທີ່ສຸດຂອງລູກທ່ານ (ອາຍຸຕໍ່າກວ່າ 12 ປີ) ແລະ ສິ່ງທີ່ລູກຂອງທ່ານຕ້ອງການ ຫຼື ຈຳເປັນຕ້ອງມີ. GAL ອາສາສະໝັກ ຫຼື GAL ຈະເຮັດວຽກເພື່ອໃຫ້ແນ່ໃຈວ່າ ລູກຂອງທ່ານໄດ້ຮັບການພິຈາລະນາຢູ່ສະເໝີໃນທຸກໆການຕັດສິນຂອງສານ.

## ຜູ້ຕິດຕໍ່ທີ່ສຳຄັນ

**ຊື່ຂອງພະນັກງານເຮັດວຽກຄະດີ:**

________________________________________

**ຕ້ອງການທະນາຍຄວາມບໍ?**

ຫ້ອງການທະນາຍຄວາມທີ່ມອບໝາຍໜ້າທີ່ (Office of Assigned Counsel):

ຫ້ອງການປ້ອງກັນສາທາລະນະ (Office of Public Defense)
ໂທລະສັບ: 360-586-3164
ອີເມວ: **opd@opd.wa.gov**
**www.opd.wa.gov/index.php/program/parents-representation**

**ຊື່ ແລະ ເບີໂທລະສັບຂອງ GAL ອາສາສະໝັກ/GA:**

________________________________________

________________________________________

**Office of the Family and Children's Ombuds (ຫ້ອງການເຈົ້າໜ້າທີ່ສືບສວນຄຳຮ້ອງຟ້ອງກ່ຽວກັບຄອບຄົວ ແລະ ເດັກ)** ຈະສືບສວນຄຳຮ້ອງທຸກກ່ຽວກັບການດຳເນີນການ ຫຼື ການບໍ່ດຳເນີນການຂອງໜ່ວຍງານ ທີ່ກ່ຽວຂ້ອງກັບເດັກ ຫຼື ພໍ່ແມ່ທີ່ມີສ່ວນກ່ຽວຂ້ອງກັບການບໍລິການປົກປ້ອງເດັກ ແລະ ສະຫວັດດີການເດັກ.
ເບີໂທລະສັບເກັບເງິນປາຍທາງ: 1-800-571-7321
ໂທລະສັບ: (206) 439-3870
**www.ofco.wa.gov**

**ລາຍງານການລ່ວງລະເມີດ/ການລະເລີຍເດັກ**
ໂທ 1-866-ENDHARM (1-866-363-4276)
ສາຍດ່ວນ 24 ຊົ່ວໂມງ/ເຈັດວັນຕໍ່ອາທິດທີ່ຈະເຊື່ອມຕໍ່ທ່ານຫາຫ້ອງການທີ່ເໝາະສົມໃນທ້ອງຖິ່ນໂດຍກົງ.
**www.dcyf.wa.gov/safety/report-abuse**

ນອກນັ້ນທ່ານຍັງສາມາດຕິດຕໍ່ **DCYF Office of Constituent Relations (ຫ້ອງການຄວາມສຳພັນເຂດ DCYF)** ໄດ້ທີ່ 1-800-723-4831 ເພື່ອໃຫ້ເຂົ້າໃຈຂະບວນການຮ້ອງທຸກເປັນທາງການ.
**www.dcyf.wa.gov/contact-us/constituent-relations**

---

*DCYF ບໍ່ໄດ້ຈຳແນກ ແລະ ໃຫ້ການເຂົ້າເຖິງໂຄງການ ແລະ ການບໍລິການທີ່ເທົ່າທຽມກັນ ສຳລັບທຸກຄົນ ໂດຍບໍ່ຄຳນຶງເຖິງເຊື້ອຊາດ, ສີຜິວ, ເພດ, ສາດສະໜາ, ຄວາມເຊື່ອ, ສະຖານະພາບການແຕ່ງງານ, ຊາດກຳເນີດ, ທັດສະນະທາງເພດ, ອາຍຸ, ສະຖານະພາບຂອງນັກຮົບເກົ່າ ຫຼື ການມີຄວາມພິການທາງດ້ານຮ່າງກາຍ, ທາງດ້ານປະສາດສຳຜັດ ຫຼື ທາງດ້ານຈິດໃຈ.*

*ຖ້າທ່ານຕ້ອງການສຳເນົາຂອງເອກະສານນີ້ໂດຍບໍ່ເສຍຄ່າໃນຮູບແບບອື່ນ ຫຼື ພາສາອື່ນ, ກະລຸນາຕິດຕໍ່ DCYF Constituent Relations (ຫ້ອງການປະຊາສຳພັນກັບຜູ້ມີສ່ວນຮ່ວມຂອງ DCYF) ທີ່ເບີ 1-800-723-4831 ຫຼື ສົ່ງອີເມວຫາ communications@dcyf.wa.gov.*

DCYF PUBLICATION CWP_0044 | DSHS 22-1499 LA (04-2023) Laotian



# ການເຂົ້າໃຈຂະບວນການສານຊັ້ນກັບ

### ທ່ານມີສິດ:

- ໄດ້ຮັບການປະຕິບັດຕໍ່ດ້ວຍຄວາມເຄົາລົບ
- ຮູ້ສິ່ງທີ່ກຳລັງເກີດຂຶ້ນກັບຄະດີຂອງທ່ານ ແລະ ລູກຂອງທ່ານ
- ໄດ້ຮັບການບໍລິການທີ່ເໝາະສົມກັບວັດທະນະທຳ
- ໃຫ້ຮັກສາຂໍ້ມູນຂອງທ່ານເປັນຄວາມລັບ

### ທ່ານມີໜ້າທີ່ຮັບຜິດຊອບ:

- ເຂົ້າຮ່ວມໃນກອງປະຊຸມວາງແຜນຮ່ວມກັນ
- ໄປຢ້ຽມຢາມລູກຂອງທ່ານ, ຖ້າເປັນໄປໄດ້
- ໃຫ້ພະນັກງານເຮັດວຽກຄະດີຂອງທ່ານຮູ້ຈັກການປ່ຽນແປງເບີໂທລະສັບ ແລະ ທີ່ຢູ່ຂອງທ່ານ
- ອະທິບາຍສິ່ງທີ່ທ່ານຕ້ອງການເພື່ອເປັນພໍ່ແມ່ທີ່ປອດໄພ

### ລູກຂອງທ່ານຈະ:

- ສະແດງໃຫ້ເຫັນຄວາມຕ້ອງການຂອງທ່ານສຳລັບການວາງແຜນສຳລັບລູກຂອງທ່ານ
- ສື່ສານກັບພະນັກງານເຮັດວຽກຄະດີຂອງທ່ານ ແລະ ເຂົ້າຮ່ວມໃນການວາງແຜນຄະດີຂອງທ່ານ

Washington State Department of
CHILDREN, YOUTH & FAMILIES

## ສິ່ງສຳຄັນຕ້ອງຮູ້ຈັກ

ໃນທຸກເວລາລະຫວ່າງຂະບວນການດຳເນີນຄະດີຂອງສານ, ຜູ້ພິພາກສາສາມາດຕັດສິນໃຈເອົາລູກຂອງທ່ານອອກໄປຢູ່ນອກເຮືອນຂອງທ່ານ ຫຼື ເອົາເຂົາເຈົ້າກັບໄປຢູ່ໃນເຮືອນຂອງທ່ານໄດ້. ຖ້າລູກຂອງທ່ານຍັງຄົງຢູ່ໃນການດູແລຢູ່ນອກບ້ານ ແລະ ທ່ານບໍ່ສາມາດດຳເນີນການປ່ຽນແປງທີ່ຈຳເປັນເພື່ອໃຫ້ລູກຂອງທ່ານປອດໄພໄດ້, ທ່ານກໍ່ຈະເສຍສິດເປັນພໍ່ແມ່ຂອງລູກທ່ານໄປ. DCYF ຈະໃຫ້ການຊ່ວຍເຫຼືອ ແລະ ການບໍລິການໃຫ້ທ່ານເພື່ອຊ່ວຍທ່ານຫຼີກລ້ຽງຜົນໄດ້ຮັບແບບນີ້ ແລະ ກັບມາຢູ່ຮ່ວມກັນກັບລູກຂອງທ່ານ.



## ຕາຕະລາງເວລາດຳເນີນຂະບວນການສານຂັ້ນກັບ – *ຢ່າລືມປຶກສາກັບທະນາຍຄວາມຂອງທ່ານກ່ຽວກັບການໄຕ່ສວນຂອງສານຕໍ່ກໍລະນີຂອງທ່ານ.*

| ການນຳສົ່ງໄປຫາ CPS | ເດັກຖືກເອົາເຂົ້າໄວ້ໃນການຄຸ້ມຄອງທີ່ໄດ້ຮັບການປົກປ້ອງ | ການໄຕ່ສວນການເບິ່ງແຍງດູແລໃນທີ່ພັກພິງ *(ລູກຂອງທ່ານສາມາດກັບຄືນບ້ານໄດ້ຫຼັງຈາກມີການໄຕ່ສວນຂອງສານທີ່ໄດ້ເຮັດເປັນລາຍການໄວ້ອັນໃດອັນໜຶ່ງແລ້ວ)* | ການໄຕ່ສວນການເບິ່ງແຍງດູແລໃນທີ່ພັກພິງຕໍ່ | ການໄຕ່ສວນຊອກຫາຂໍ້ເທັດຈິງ *(ພາຍໃນ 75 ວັນຂອງການຍື່ນຄຳຮ້ອງທຸກຂັ້ນກັບ)* | ການໄຕ່ສວນການດຳເນີນການ *(ພາຍໃນ 90 ວັນຂອງການຍື່ນຄຳຮ້ອງທຸກຂັ້ນກັບ)* | ການໄຕ່ສວນທົບທວນຂັ້ນກັບເທື່ອທຳອິດ | ການໄຕ່ສວນການວາງແຜນຖາວອນ | ການໄຕ່ສວນທົບທວນຂັ້ນກັບ *(ດຳເນີນທຸກໆ 6 ເດືອນ)* |
|---|---|---|---|---|---|---|---|---|
| **ຂະບວນການເລີ່ມຕົ້ນບ່ອນນີ້** | **ສູງສຸດ 72 ຊົ່ວໂມງ** | | **30 ວັນ** | **90 ວັນ** | | **6 ເດືອນ** | **15-18 ເດືອນ** | **18 ເດືອນ** |
| CPS ຮັບການສົ່ງຕໍ່ກ່ຽວກັບການທາລຸນ ຫຼື ການລະເລີຍເດັກ. ການສົ່ງຕໍ່ຖືກປະເມີນຜົນ ແລະ ກວດຄັດກອງເພື່ອການສືບສວນ, ການຕອບສະໜອງຕໍ່ການປະເມີນຂອງຄອບຄົວ ຫຼື ກວດຄັດກອງອອກ. ຖ້າຫາກເຊື່ອໄດ້ວ່າມີຄວາມຈຳເປັນຕ້ອງປົກປ້ອງເດັກຈາກອັນຕະລາຍທາງດ້ານຮ່າງກາຍ, ສານ ຫຼື ໜ່ວຍງານບັງຄັບໃຊ້ກົດໝາຍອາດຈະນຳຕົວລູກຂອງທ່ານອອກໄປຈາກບ້ານຂອງທ່ານ ແລະ ຍື່ນຄຳຮ້ອງຂໍການເພິ່ງພາອາໄສ. ຖ້າລູກຂອງທ່ານສາມາດຢູ່ໃນເຮືອນຂອງທ່ານໄດ້ຢ່າງປອດໄພ, ກໍ່ສາມາດຍື່ນຄຳຮ້ອງຂໍການເພິ່ງພາອາໄສໄດ້ໂດຍບໍ່ຕ້ອງເອົາລູກຂອງທ່ານອອກຈາກບ້ານ. | ຖ້າມີການນຳລູກຂອງທ່ານອອກໄປຈາກການດູແລຂອງທ່ານ, ກໍ່ຈະມີການຈັດ Shelter Care Hearing (ການໄຕ່ສວນພິຈາລະນາການເບິ່ງແຍງດູແລໃນສະຖານສົງເຄາະ) ຂຶ້ນພາຍໃນ 72 ຊົ່ວໂມງຫຼັງຈາກມີການນຳລູກຂອງທ່ານອອກໄປຈາກເຮືອນຂອງທ່ານ, ຍົກເວັ້ນທ້າຍອາທິດ ແລະ ວັນພັກຕ່າງໆ. ຖ້າມີການຍື່ນຄຳຮ້ອງຂໍການເພິ່ງພາອາໄສ ແລະ ລູກຂອງທ່ານຍັງຄົງຢູ່ໃນເຮືອນຂອງທ່ານ, ກໍ່ຈະມີການຈັດການໄຕ່ສວນພິຈາລະນາການເບິ່ງແຍງດູແລໃນສະຖານສົງເຄາະຂຶ້ນ ເພື່ອສ້າງເງື່ອນໄຂໃຫ້ລູກຂອງທ່ານສາມາດຢູ່ໃນເຮືອນໄດ້ຢ່າງມີຄວາມປອດໄພ. | ຢູ່ໃນການໄຕ່ສວນນີ້, ທ່ານສາມາດຂໍໃຫ້ສານແຕ່ງຕັ້ງທະນາຍຄວາມໃຫ້ທ່ານຄົນໜຶ່ງໄດ້. ຜູ້ພິພາກສາຈະຕັດສິນວ່າ ຈະຕ້ອງໄດ້ເອົາລູກຂອງທ່ານອອກໄປຢູ່ນອກບ້ານຂອງທ່ານ ຫຼື ຈະໃຫ້ຢູ່ກັບທ່ານ. ຖ້າລູກຂອງທ່ານຕ້ອງໄດ້ໄປຢູ່ພາຍໃຕ້ການເບິ່ງແຍງດູແລນອກບ້ານ, ທ່ານສາມາດຂໍໃຫ້ລູກຂອງທ່ານໄປຢູ່ກັບພີ່ນ້ອງ ຫຼື ຍາດພີ່ນ້ອງແທນທີ່ຈະໄປຢູ່ໃນເຮືອນອຸປະຖຳ. ຖ້າລູກຂອງທ່ານຕ້ອງໄດ້ໄປຢູ່ນອກບ້ານ, ພະນັກງານຄຸ້ມຄອງກໍລະນີຈະກຳນົດແຜນການໄປຢ້ຽມຢາມເປັນປົກກະຕິ. | ອີກເທື່ອໜຶ່ງ ສານຕັດສິນວ່າລູກຂອງທ່ານຈະຢູ່ໃນການເບິ່ງແຍງດູແລນອກບ້ານບໍ່ ຫຼື ຈະໃຫ້ກັບຄືນໄປຫາທ່ານ. ສານທົບທວນເບິ່ງແຜນການຢ້ຽມຢາມຂອງຄອບຄົວຂອງທ່ານ ແລະ ບ່ອນທີ່ລູກຂອງທ່ານກຳລັງອາໄສຢູ່. | ຖ້າທ່ານສືບຕໍ່ຄັດຄ້ານຕໍ່ການເພິ່ງພາອາໄສ, ສານຈະເອົາຄຳໃຫ້ການຈາກທ່ານ ແລະ ຜູ້ອື່ນໆກ່ຽວກັບໄພຂົ່ມຂູ່ຕໍ່ຄວາມປອດໄພຂອງເດັກ ແລະ ຂໍ້ມູນທີ່ໄດ້ລະບຸໄວ້ຢູ່ໃນຄຳຮ້ອງຂໍການເພິ່ງພາອາໄສ. ສານຈະຕັດສິນໃຫ້ລູກຂອງທ່ານຕົກໄປເປັນບຸກຄົນເພິ່ງພາອາໄສຂອງລັດ ຫຼື ຍົກເລີກການເພິ່ງພາອາໄສ. | ຖ້າລູກຂອງທ່ານຖືກປະກາດວ່າເປັນບຸກຄົນເພິ່ງພາອາໄສ, ສານຈະສັ່ງໃຫ້ທ່ານເຂົ້າຮ່ວມໃນການບໍລິການຕ່າງໆເພື່ອກຳຈັດໄພຂົ່ມຂູ່ຕໍ່ຄວາມປອດໄພ ແລະ ຫຼຸດຜ່ອນຄວາມສ່ຽງຕ່າງໆໃນບ້ານຂອງທ່ານ. ນອກຈາກນັ້ນ ສານກໍ່ຍັງຈະກ່າວເຖິງບັນຫາການຈັດບ່ອນຢູ່ ຫຼື ການໄປຢາມຢູ່ໃນການໄຕ່ສວນນີ້ອີກດ້ວຍ. | ສານຈະທົບທວນຄວາມຄືບໜ້າຂອງທ່ານໃນການບໍລິການ ແລະ ພິຈາລະນາວ່າມີການບໍລິການເພີ່ມເຕີມໃດບໍ່ທີ່ສາມາດເພີ່ມຄວາມສາມາດຂອງທ່ານເພື່ອໃຫ້ບ້ານທີ່ມີຄວາມປອດໄພແກ່ລູກຂອງທ່ານ. | ສານຈະທົບທວນການເຂົ້າຮ່ວມຂອງທ່ານຢູ່ໃນການບໍລິການ ແລະ ຖ້າທ່ານບໍ່ໄດ້ເຮັດໃຫ້ມີຄວາມຄືບໜ້າພຽງພໍຢູ່ໃນຈຸດນີ້ ແລະ ລູກຂອງທ່ານແມ່ນຖືກຈັດໃຫ້ຢູ່ພາຍໃຕ້ການເບິ່ງແຍງດູແລຢູ່ນອກບ້ານຢູ່, ສານກໍ່ຈະສັ່ງ (ໃນບາງກໍລະນີ) ໃຫ້ລັດຍື່ນຄຳຮ້ອງຂໍເພື່ອຕັດສິດການເປັນພໍ່ແມ່ຂອງທ່ານ. ຖ້າມີການຍື່ນຄຳຮ້ອງຂໍຕັດສິດ, ກໍ່ຈະມີການພິຈາລະນາຄະດີ ຊຶ່ງທະນາຍຄວາມຂອງທ່ານຈະນຳສະເໜີຫຼັກຖານກ່ຽວກັບຄະດີຂອງທ່ານ. ຜູ້ພິພາກສາຈະຕັດສິນວ່າຈະຕັດ ຫຼື ບໍ່ຕັດສິດໃນການເປັນພໍ່ແມ່ຂອງທ່ານ. | ສານທົບທວນການເຂົ້າຮ່ວມຂອງທ່ານຢູ່ໃນການບໍລິການ ແລະ ຖ້າທ່ານບໍ່ໄດ້ເຮັດໃຫ້ມີຄວາມຄືບໜ້າພຽງພໍຢູ່ໃນຈຸດນີ້, ສານຈະສັ່ງ (ໃນບາງກໍລະນີ) ໃຫ້ລັດຍື່ນຄຳຮ້ອງທຸກເພື່ອສິ້ນສຸດສິດການເປັນພໍ່ແມ່ຂອງທ່ານ.<br><br>ຖ້າມີການຍື່ນຄຳຮ້ອງທຸກການສິ້ນສຸດ, ຈະມີການພິຈາລະນາຄະດີທີ່ທະນາຍຄວາມຂອງທ່ານ ແລະ ທະນາຍຄວາມຂອງລັດຈະນຳສະເໜີຫຼັກຖານກ່ຽວກັບຄະດີຂອງທ່ານ. ຜູ້ພິພາກສາຈະຕັດສິນວ່າຈະສິ້ນສຸດສິດການເປັນພໍ່ແມ່ຂອງທ່ານຫຼືບໍ່. |

## ກອງປະຊຸມວາງແຜນຮ່ວມກັນ

ການເຂົ້າຮ່ວມຂອງທ່ານໃນທຸກກອງປະຊຸມວາງແຜນຮ່ວມກັນຂອງ DCYF ແມ່ນມີຄວາມສຳຄັນຫຼາຍ. ທ່ານຈະຊ່ວຍສ້າງແຜນສຳລັບກໍລະນີຂອງຄອບຄົວຂອງທ່ານ ເພື່ອຫຼຸດຜ່ອນບັນດາປັດໄຈສ່ຽງ, ສ້າງເປົ້າໝາຍຖາວອນສຳລັບລູກຂອງທ່ານ ແລະ ສ້າງແຜນການໄປຢ້ຽມຢາມລູກຂອງທ່ານ. ມີກອງປະຊຸມຫຼາຍປະເພດທີ່ທ່ານຈະຕ້ອງໄດ້ເຂົ້າຮ່ວມ. ປະເພດກອງປະຊຸມທີ່ເກີດຂຶ້ນເລື້ອຍທີ່ສຸດໄດ້ແກ່ Family Team Decision Making (ການດຳເນີນການຕັດສິນໃຈຂອງທີມຄອບຄົວ, FTDM) ແລະ ການວາງແຜນຖາວອນ. ກອງປະຊຸມເຫຼົ່ານີ້ເປັນເວລາດີທີ່ຈະນຳສະເໜີທັດສະນະຂອງທ່ານ, ສິ່ງທີ່ທ່ານເຊື່ອວ່າມີຄວາມຈຳເປັນຕ້ອງປ່ຽນແປງ ແລະ ການຊ່ວຍເຫຼືອອັນໃດທີ່ທ່ານຕ້ອງການເພື່ອເຮັດໃຫ້ການປ່ຽນແປງເຫຼົ່ານີ້ເກີດຂຶ້ນ.

## ການຢ້ຽມຢາມຂອງພໍ່ແມ່, ລູກ ແລະ ພີ່ນ້ອງ (ຖ້າລູກຂອງທ່ານຖືກຈັດໃຫ້ຢູ່ພາຍໃຕ້ການເບິ່ງແຍງດູແລຢູ່ນອກບ້ານ)

ແຜນການຢ້ຽມຢາມໃຫ້ມີເວລາຢູ່ຮ່ວມກັນແບບຄອບຄົວເບື້ອງຕົ້ນ ຈະຖືກສ້າງຂຶ້ນໃນກອງປະຊຸມ Family Team Decision Making (ການດຳເນີນການຕັດສິນໃຈຂອງທີມຄອບຄົວ, FTDM) ຄັ້ງທຳອິດ. ການເຂົ້າຮ່ວມຂອງທ່ານໃນການຢ້ຽມຢາມໃຫ້ມີເວລາຢູ່ຮ່ວມກັນແບບຄອບຄົວກັບລູກຂອງທ່ານເປັນປົກກະຕິ ຈະຊ່ວຍໃຫ້ທ່ານ ແລະ ລູກຂອງທ່ານຮັກສາຄວາມຜູກພັນຂອງທ່ານ ແລະ ການເຊື່ອມໂຍງກັນໃນລະຫວ່າງເວລາທີ່ລູກຂອງທ່ານບໍ່ໄດ້ອາໄສຢູ່ນຳທ່ານ. ແຜນການຢ້ຽມຢາມໃຫ້ມີເວລາຢູ່ຮ່ວມກັນແບບຄອບຄົວ ຈະກຳນົດວ່າການຢ້ຽມຢາມແມ່ນຈະໄປຢ້ຽມຢາມຢູ່ໃສ, ໄປຢ້ຽມຢາມເລື້ອຍປານໃດ ແລະ ດົນປານໃດ. ລາຍລະອຽດອື່ນໆຈະລວມທັງຜູ້ທີ່ຈະສາມາດເຂົ້າຮ່ວມການຢ້ຽມຢາມໃຫ້ມີເວລາຢູ່ຮ່ວມກັນແບບຄອບຄົວ ແລະ ລະດັບໃນການຄຸ້ມຄອງ. ແຜນການຢ້ຽມຢາມໃຫ້ມີເວລາຢູ່ຮ່ວມກັນແບບຄອບຄົວ ສາມາດປັບປຸງໃໝ່ໄດ້ໃນທຸກເວລາ. ປຶກສາຫາລືກ່ຽວກັບແຜນການຢ້ຽມຢາມໃຫ້ມີເວລາຢູ່ຮ່ວມກັນແບບຄອບຄົວຂອງທ່ານກັບພະນັກງານຄຸ້ມຄອງກໍລະນີຂອງທ່ານ. ຖ້າທ່ານຕ້ອງການຄວາມຊ່ວຍເຫຼືອເພື່ອຢ້ຽມຢາມລູກຂອງທ່ານ, ພະນັກງານຄຸ້ມຄອງກໍລະນີຂອງທ່ານ ແລະ/ຫຼື ທະນາຍຄວາມຈະສາມາດຊ່ວຍທ່ານໄດ້.